ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ກົມລ້ຽງສັດ ແລະ ການປະມົງ

ເລກທີ...- 36 17...../ກລປ

ນະຄອນຫຼວງວຽງຈັນ, ວັນທີ...21 AUG 2026...

# ໜັງສືແຈ້ງການ

**ເລື່ອງ: ການຂະຫຍາຍກຳນົດເວລາຮັບສະໝັກ ບຸກຄະລາກອນບັນຊີໂຄງການ (Project Accountant).**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມລ້ຽງສັດ ແລະ ການປະມົງ ສະບັບເລກທີ 1246/ກສ, ລົງວັນທີ 12 ກັນຍາ 2025;
- ອີງຕາມ ສັນຍາກູ້ຢືມ ແລະ ຊ່ວຍເຫຼືອລ້າ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ກັບ ທະນາຄານພັດທະນາອາຊີ (ADB), ເລກທີ ADB Loan No. 4542-LAO(COL), Grant No. 0994-LAO(SF), and Grant No. 0995- LAO(CCF), ລົງວັນທີ 12 ທັນວາ 2024;
- ອີງຕາມ ຄູ່ມືຈັດຕັ້ງປະຕິບັດໂຄງການ (PAM) ສະບັບເລກທີ 53240-002, ເດືອນ ຕຸລາ 2024;
- ອີງຕາມ ໜັງສືປະກາດຮັບສະໝັກພະນັກງານ ສະບັບເລກທີ 2877/DLF, ລົງວັນທີ 24/7/2026.

ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ຂໍແຈ້ງມາຍັງບັນດາທ່ານຊາບວ່າ: ກົມລ້ຽງລ້ຽງສັດ ແລະ ການປະມົງ ໄດ້ປະກາດຮັບສະໝັກ ບຸກຄະລາກອນ (ຄົນລາວ) ທີ່ມີຄຸນສົມບັດເໝາະສົມ ເຂົ້າຮ່ວມງານໃນ 01 ຕຳແໜ່ງ ຄື: ບັນຊີໂຄງການ (Project Accountant) ປະຈຳຢູ່ ໂຄງການປັບປຸງການຄວບຄຸມພະຍາດສັດ ແລະ ການລ້ຽງສັດເປັນສິນຄ້າຕາມແລວຊາຍແດນ, ກົມລ້ຽງສັດ ແລະ ການປະມົງ, ສະບັບເລກທີ 2877/DLF, ລົງວັນທີ 24/7/2026 ແລະ ໄດ້ລົງໂຄສະນາໜັງສືພິມ ຄັ້ງວັນທີ 29/7/2026, 108 ຈອບ ຄັ້ງວັນທີ 31/7/2026 ຊຶ່ງໄດ້ກຳນົດມື້ປິດຮັບສະໝັກ ໃນວັນທີ 10/8/2026, ເວລາ 16:00 ໂມງ ທີ່ຜ່ານມານັ້ນ, ເຫັນວ່າໄລຍະເວລາໃນການລົງໂຄສະນາຍັງສັ້ນເຮັດໃຫ້ການຍື່ນ ຟອມສະໝັກຂອງບຸກຄະລາກອນທີ່ມີຄວາມສົນໃຈໃນການຮ່ວມວຽກບໍ່ທ່ວງທັນ ແລະ ເພື່ອໃຫ້ຄົບຕາມເງື່ອນຂອງກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ. ສະນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານຊາບ ໃນການຂະຫຍາຍເວລາ ນັບແຕ່ວັນລົງລາຍເຊັນ ແລະ ກຳນົດມື້ປິດຮັບສະໝັກມາເປັນວັນທີ **11/9/2026, ເວລາ 16:00ໂມງ**. ໂດຍຜູ້ສະໝັກຕ້ອງມີປະສົບການດ້ານການເງິນ-ການບັນຊີ ຫຼາຍກວ່າ 03 ປີ. ຜູ້ສົນໃຈສະໝັກໃນຕຳແໜ່ງດັ່ງກ່າວ ກະລຸນາສົ່ງໃບສະໝັກງານ (Application Letter) ພ້ອມດ້ວຍປະຫວັດຫຍໍ້ (CV) ເຖິງທ່ານ ທອງຄູນ ຄ່ອງຫຼ້າລ່ຽນ, ຫົວໜ້າປະສານງານໂຄງການ, ກົມລ້ຽງສັດ ແລະ ການປະມົງ, ອີເມວ: clhvcip.adb@gmail.com ແລະ ນາງ ວັນນິດາ ທອງພັນມະຫາ, ຊ່ຽວຊານບັນຊີ-ການເງິນ, ອີເມວ: vannidathongphan@gmil.com.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ພ້ອມກັບຈັດຕັ້ງປະຕິບັດຕາມວັນເວລາດັ່ງກ່າວດ້ວຍ.

ຫົວໜ້າກົມ

ບົວທົງ ຄຳຫາ